ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ
ພະແນກໂຍທາທິການ ແລະ ຂົນສົ່ງ

ເລກທີ: 4194 /ຍທຂ
ບໍລິຄຳໄຊ, ວັນທີ: 09 ກັນຍາ 2026

# ໜັງສືແຈ້ງເຊີນ

**ເຖິງ:** ທ່ານອໍານວຍການ ບັນດາບໍລິສັດທີ່ດໍາເນີນທຸລະກິດ ທີ່ປຶກສາດ້ານວຽກງານກໍ່ສ້າງຂົວທາງ.

**ເລື່ອງ:** ສະເໜີໃຫ້ຍື່ນຄວາມສົນໃຈ ເພື່ອການສະໜອງການບໍລິການທີ່ປຶກສາໃຫ້ແກ່ ໂຄງການປັບປຸງຂະຫຍາຍທາງ 4 B ແຕ່ 4 ແຍກທ່າດ່ານ ຫາ 3 ແຍກກົມສິບເຈັດ, ລວງຍາວ 2,600 ແມັດ, ຄວາມກ້ວາງໜ້າທາງ 14 ແມັດ, ເມືອງປາກຊັນ, ແຂວງບໍລິຄໍາໄຊ.

1. ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄໍາໄຊ ໄດ້ຮັບອະນຸມັດງົບປະມານແຫ່ງລັດປະຈໍາປີ 2026 ເພື່ອດໍາເນີນ ໂຄງການປັບປຸງຂະຫຍາຍທາງ 4 B ແຕ່ 4 ແຍກທ່າດ່ານ ຫາ 3 ແຍກກົມສິບເຈັດ, ລວງຍາວ 2,600 ແມັດ, ຄວາມກ້ວາງໜ້າທາງ 14 ແມັດ, ເມືອງປາກຊັນ, ແຂວງບໍລິຄໍາໄຊ.
2. ພະແນກ ຍທຂ ແຂວງບໍລິຄໍາໄຊ, ຈຶ່ງຂໍເຊີນຊວນບໍລິສັດທີ່ປຶກສາທີ່ມີຄວາມສົນໃຈໃຫ້ຍື່ນສະເໜີຄວາມສົນໃຈ ເພື່ອສະໜອງການບໍລິການທີ່ປຶກສາໃຫ້ແກ່ການກໍ່ສ້າງ ໂຄງການປັບປຸງຂະຫຍາຍທາງ 4 B ແຕ່ 4 ແຍກທ່າດ່ານ ຫາ 3 ແຍກກົມສິບເຈັດ, ລວງຍາວ 2,600 ແມັດ, ຄວາມກ້ວາງໜ້າທາງ 14 ແມັດ, ເມືອງປາກຊັນ, ແຂວງບໍລິຄໍາໄຊ.
3. ທີ່ປຶກສາທີ່ມີຄວາມສົນໃຈ ຕ້ອງສະໜອງຂໍ້ມູນທີ່ສະແດງເຖິງຄວາມເໝາະສົມ ໃນການສະໜອງການບໍລິການທີ່ປຶກສາ (ເອກະສານຍື່ນສະເໜີຄວາມສົນໃຈປະກອບມີຄື: ສິ່ງພິມໂຄສະນາຂອງບໍລິສັດ, ທະບຽນວິສາຫະກິດ, ໃບອານຸຍາດ, ມອບພັນທະອາກອນ, ລາຍລະອຽດຂອງໜ້າວຽກທີ່ຄ້າຍຄືກັນ, ປະສົບການຂອງໜ້າວຽກທີ່ຄ້າຍຄືກັນ, ພະນັກງານທີ່ມີປະສົບການທີ່ເໝາະສົມ ແລະ ອື່ນໆ). ເອກະສານຍື່ນຄວາມສົນໃຈຕ້ອງບໍ່ເກີນ 30 ໜ້າ (ບໍ່ລວມເອົາສິ່ງພິມຕ່າງໆ), ພ້ອມທັງດ້ານການເງິນ, ບັນດາມາດຖານໃຫຍ່ໃນການຄັດເລືອກມີຄື:

- ບໍລິສັດ ຈະຕ້ອງມີປະສົບການເປັນທີ່ປຶກສາໂຄງການກໍ່ສ້າງທາງເບຕົງຢ່າງໜ້ອຍ 5 ປີ ຂຶ້ນໄປ.
- ບໍລິສັດ ມີອຸປະກອນຮັບໃຊ້ກ່ຽວກັບການກວດກາດ້ານຄຸນນະພາບ ແລະ ບໍລິມາດວຽກຄົບຊຸດ.
- ມີບຸກຄະລາກອນທີ່ມີປະສົບການ 10 ປີຂຶ້ນໄປ ຊໍານານງານກ່ຽວກັບວຽກຄວບຄຸມບໍລິມາດການກໍ່ສ້າງ ຂົວ-ທາງ ຈໍານວນ 01 ຄົນ.
- ມີບຸກຄະລາກອນທີ່ມີປະສົບການ 05 ປີຂຶ້ນໄປ ຊໍານານງານກ່ຽວກັບວຽກກໍ່ສ້າງທາງ ຈໍານວນ 1 ຄົນ.
- ມີບຸກຄະລາກອນທີ່ມີປະສົບການ 05 ປີຂຶ້ນໄປ ຊໍານານງານກ່ຽວກັບວຽກສໍາຫຼວດ-ອອກແບບກໍ່ສ້າງທາງ ຈໍານວນ 01 ຄົນ.
- ມີບຸກຄະລາກອນທີ່ມີປະສົບການ 5 ປີຂຶ້ນໄປ ຊໍານານງານກ່ຽວກັບວຽກຄວບຄຸມຄຸນນະພາບວັດສະດຸກໍ່ສ້າງ ຂົວ-ທາງ ຈໍານວນ 01 ຄົນ.
- ບໍລິສັດ ຕ້ອງມີພາຫະນະຮັບໃຊ້, ນ້ຳມັນເຊື້ອໄຟ, ເຄື່ອງໃຊ້ຫ້ອງການ ແລະ ສິ້ນເປືອງຕ່າງໆເປັນຂອງຕົນເອງ.

- ທີ່ປຶກສາ ຈະຖືກຄັດເລືອກໂດຍອີງຕາມວິທີຄັດເລືອກຄຸນນະພາບແລະລາຄາ QCBS (Quality and Cost – Base Systems) ຕາມຂໍ້ກຳນົດຂອງດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ສ້ອມແປງ ແລະ ການບໍລິການ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

4. ທີ່ປຶກສາ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາຂໍ້ມູນກ່ຽວກັບການສະເໜີການບໍລິການທີ່ປຶກສາດັ່ງກ່າວນີ້ໄດ້ຕາມທີ່ຢູ່ຂໍ້ 6 ລຸ່ມນີ້ ໃນໂມງລັດຖະການ (8:00 ຫາ 12:00 ໂມງ ແລະ 13:00 ຫາ 16:00 ໂມງ), ວັນຈັນ ເຖິງ ວັນສຸກ.
5. ເອກະສານຍື່ນຄວາມສົນໃຈຕ້ອງສົ່ງເຖິງ: ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄຳໄຊ, ສຳນັກງານຕັ້ງຢູ່ທາງຫຼວງແຫ່ງຊາດເລກທີ 21, ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ, ໂທລະສັບ/ແຟັກ: 054-212091 ແລະ ພະແນກການເງິນ ແຂວງບໍລິຄຳໄຊ, ຂະແໜງ ຈັດຊື້-ຈັດຈ້າງ, ໂທລະສັບ: 020-28870055, ໃນວັນທີ 10 ກັນຍາ 2026.
6. ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ ຫ້ອງປະຊຸມ ຂະແໜງຂົວທາງ ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄຳໄຊ, ທາງ 21, ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ, ໃນເວລາ 9:00 ໂມງຕອນເຊົ້າ, ຂອງວັນທີ **16 ຕຸລາ 2026**; ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຮັບຊາບ ແລະ ເຂົ້າຮ່ວມການຄັດເລືອກຄຸນນະວຸດທິຕາມແຈ້ງເຊີນດັ່ງກ່າວນີ້ດ້ວຍ.

**ຫົວໜ້າພະແນກ**

ກະຊວງໂຍທາທິການ ແລະ ຂົນສົ່ງ
ພະແນກ ໂຍທາທິການ ແລະ ຂົນສົ່ງ
ແຂວງບໍລິຄຳໄຊ

ໂດສາຈານ ແສນທະວີໄຊ

**ເບີໂທຕິດຕໍ່:**

1. *ທ່ານ ກ້ອນນວນດຳ ຈັນທະມີນາວົງ ຮອງຂະແໜງຂົວທາງ ພະແນກ ຍທຂ, ໂທ: 020 22117888.*
2. *ທ່ານ ຄຳປະເສີດ ພັນນະວົງ ຂະແໜງ ຈັດຊື້-ຈັດຈ້າງ ພະແນກ ການເງິນ, ໂທ: 020 28870055.*